**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 29 ມະກະຣາ 2023 (01-29-2023)

---

## ມັນນໍາຄວາມເຊື່ອໝັ້ນມາໃຫ້ບໍ່?

*ເມື່ອໃດມັນເປັນການຍາກສໍາລັບທ່ານໃນການຍອມຮັບວ່າທ່ານໄດ້ກະທໍາຄວາມຜິດ?*

**ຈຸດສໍາຄັນໃນບົດຮຽນ**: ສຽງຂອງພຣະເຈົ້າສແວງຫາຕັດສິນລົງໂທດເຮົາຕາມຄວາມຈິງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຄັ້ງນຶ່ງ ຂ້າພະເຈົ້າໄດ້ໃຊ້ເວລາເຖິງສີ່ຊົ່ວໂມງພະຍາຍາມເກັ້ຽກ່ອມຊາຍຄົນນຶ່ງ ບໍ່ໃຫ້ຫຼີ້ນຊູ້ກັບຍິງທີ່ແຕ່ງງານແລ້ວ. ລາວໄດ້ຢືນຢັນວ່າລາວແລະຍິງອື່ນນັ້ນ ໄດ້ອະທິຖານເພື່ອຄວາມສັມພັນຂອງເຂົາແລ້ວ. ເຂົາເຊື່ອວ່າພຣະເຈົ້າໄດ້ໃຫ້ເຂົາມີຄວາມຮັກຕໍ່ກັນ ແລະໄດ້ປົດປ່ອຍເຂົາຈາກຄໍາໝັ້ນສັນຍາການແຕ່ງງານຂອງເຂົາ. ລາວໄດ້ໃຫ້ເຫດຜົນວ່າພຣະເຈົ້າຈະບໍ່ໃຫ້ຄວາມຮັກນີ້ແກ່ເຂົາເວັ້ນເສັຽແຕ່ພຣະອົງມີຈຸດປະສົງໃຫ້ເຂົາຢູ່ຮ່ວມກັນ.

ພຣະວິນຍານບໍຣິສຸດຢືນຢັນກັບຂ້າພະເຈົ້າວ່ານີ້ແມ່ນຄວາມຜິດ ແລະປາກົດແຈ້ງວ່າເຂົາໄດ້ຝ່າຝືນຂໍ້ຄໍາສັ່ງຂອງພຣະເຈົ້າໃນພຣະຄັມພີ. ເປັນທີ່ຊັດເຈນແລ້ວວ່າ ພຣະວິນຍານບໍຣິສຸດຕັດສິນລົງໂທດຊາຍຄົນນີ້, ເພາະວ່າລາວໄດ້ປະພຶດຜິດນານເກີນກວ່າຈະປັບຕົວໄດ້. ພຽງແຕ່ພາຍລຸນມາ, ຫຼັງຈາກສອງຄອບຄົວ ແລະໂບດຂອງເຂົາທົນທຸກກັບການຄາດກັມຢ່າງຫຼວງຫຼາຍ, ຊາຍຄົນນີ້ຮັບຮູ້ການຕັດສິນລົງໂທດຂອງພຣະເຈົ້າບໍ່. ພຣະເຈົ້າໄດ້ເຕືອນໃນສິ່ງທີ່ລາວໄດ້ກະທໍາ, ແຕ່ລາວປະຕິເສດບໍ່ຍອມຟັງ.

ທາງທໍາອິດທີ່ພຣະເຈົ້າເວົ້າແມ່ນການຕັດສິນລົງໂທດຄວາມບາບຂອງເຮົາ. ພຣະອົງຮັກເຮົາຫຼາຍ ຈົນປ່ອຍໃຫ້ເຮົາແລ່ນເຂົ້າໄປໃນຄວາມບາບ ໂດຍບໍ່ໄດ້ເອີ້ນເຮົາໃຫ້ກັບໃຈ ແລະຕ່າວຄືນມາຫາພຣະອົງ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ກິຈການ 2:32-36</u>

*32 ພຣະເຢຊູນີ້ແຫລະ, ທີ່ພຣະເຈົ້າໄດ້ຊົງບັນດານໃຫ້ຄືນພຣະຊົນແລ້ວ ຝ່າຍຂ້າພະເຈົ້າທັງຫຼາຍເປັນພະຍານເຖິງເລື້ອງນີ້. 33 ເມື່ອຊົງຖືກ*
*ຍົກຂຶ້ນຢູ່ທີ່ພຣະຫັດກໍ້າຂວາຂອງພຣະເຈົ້າ ແລະໄດ້ຊົງຮັບພຣະວິນຍານບໍຣິສຸດຈາກພຣະບິດາຕາມພຣະສັນຍາ ພຣະອົງໄດ້ຊົງຖອກ*
*ພຣະວິນຍານນັ້ນລົງມາ ດັ່ງພວກທ່ານໄດ້ເຫັນແລະໄດ້ຍິນແລ້ວນັ້ນ. 34 ເຫດວ່າກະສັດດາວິດບໍ່ຂຶ້ນໄປຍັງສວັນ ແລະທ່ານເອງໄດ້ຊົງ*
*ກ່າວວ່າ, 'ພຣະເຈົ້າຊົງກ່າວແກ່ອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າວ່າຈົ່ງນັ່ງທີ່ຂວາມືຂອງເຮົາ, 35 ຈົນກວ່າເຮົາຈະປາບສັດຕູຂອງທ່ານ*
*ໃຫ້ຢູ່ໃຕ້ຕີນຂອງທ່ານ.' 36 ເຫດສັນນັ້ນໃຫ້ຍາດວົງອິສຣາເອນຮູ້ຄັກແນ່ວ່າ ພຣະເຈົ້າໄດ້ຊົງຍົກພຣະເຢຊູນີ້ ຊຶ່ງທ່ານທັງຫຼາຍໄດ້ຕອກຕິດ*
*ໄວ້ທີ່ໄມ້ກາງແຂນນັ້ນ ຊົງແຕ່ງຕັ້ງໃຫ້ເປັນທັງອົງພຣະຜູ້ເປັນເຈົ້າແລະເປັນພຣະຄຣິດ."*

ບາງຄົນຢຸດສງັກບໍ່ຕ້ອງການສແວງຫາທີ່ຈະໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າແລະການຄົ້ນຫານໍ້າພຣະທັຍຂອງພຣະອົງສໍາລັບການຕັດສິນໃຈທາງໂລກ. ໂດຍທົ່ວໄປພຣະເຈົ້າເວົ້າກັບເຮົາກ່ຽວກັບຄວາມຫ່ວງໃຍແລະສິ່ງຈໍາເປັນ. ພຣະອົງເວົ້າເພື່ອວ່າຈະໄດ້ຮູ້ວ່າມີຫຍັງຢູ່ໃນໃຈຂອງພຣະອົງ, ເຊີນເຮົາເຂົ້າຮ່ວມພຣະຣາຊກິດຂອງພຣະອົງ. ຄວາມຫ່ວງໃຍປະການແລກ

ຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງແມ່ນເຂົາມີຄວາມສັມພັນອັນຖືກຕ້ອງກັບພຣະອົງ. ຖ້າ ທ່ານຍັງບໍ່ທັນໄດ້ເປັນຜູ້ຕິດຕາມພຣະເຢຊູເທື່ອ, ດັ່ງນັ້ນ ຈຸດສຸມປະການແລກຂອງພຣະເຈົ້າບໍ່ແມ່ນໂຮງງານທີ່ທ່ານເຮັດວຽກ, ຫຼືຄຸ້ມທີ່ທ່ານຢູ່; ຈຸດເນັ້ນໜັກແມ່ນເພື່ອທ່ານຈະຍອມຮັບວ່າທ່ານເປັນຄົນບາບ, ຫັນຈາກຄວາມບາບ, ແລະວາງໃຈເຊື່ອໃນພຣະຄຣິດ. ກິຈການບົດ 2 ເລີ້ມຕົ້ນດ້ວຍພຣະວິນຍານບໍຣິສຸດສວມທັບຜູ້ຕິດຕາມພຣະເຢຊູ 120 ຄົນໃນຫ້ອງຊັ້ນເທິງ. ເຫດການນີ້ໄດ້ນຳມາຊຶ່ງບົດເທສນາຂອງທ່ານຊີໂມນເປໂຕ, ເມື່ອເພິ່ນເທສນາໃຫ້ຊາວຢິວທີ່ຢູ່ຕາມທາງເຢຣູຊາເລັມໃນງານເພັນເຕຄໍສະເຕ. ພຣະເຈົ້າມັກຈະກ່າວຜ່ານການເທສນາພຣະທັມຂອງພຣະອົງ. ໃນກໍຣະນີນີ້, ທ່ານເປໂຕໄດ້ເທສນາກ່ຽວກັບການເປັນຄືນມາແລະຄວາມສູງສົ່ງຂອງພຣະເຢຊູ.

*ແມ່ນຫຍັງເຮັດໃຫ້ທ່ານປລາດທີ່ສຸດກ່ຽວກັບການສິ້ນພຣະຊົນແລະການຄືນມາຂອງພຣະເຢຊູ?*

ພຣະທັມພຣະກິດຕິຄຸນໄດ້ໄຂເຣື່ອງພຣະເຢຊູໄດ້ຟື້ນຂຶ້ນມາຈາກຕາຍ (1ກຣທ 15:17). ທ່ານເປໂຕໄດ້ປະກາດວ່າເພິ່ນແລະຜູ້ຕິດຕາມເພິ່ນໄດ້ເປັນພະຍານເຣື່ອງການເປັນຄືນມາຈາກຕາຍ. ນີ້ແມ່ນຂໍ້ຄວາມອັນຖືກຕ້ອງຂອງທ່ານເປໂຕ, ເພາະວ່າເພິ່ນບໍ່ໄດ້ກ່າວໃນສິ່ງເພິ່ນບໍ່ຮູ້, ແຕ່ແທນທີ່ຈະເທສນາເຣື່ອງທີ່ເພິ່ນບໍ່ຮູ້ ເພິ່ນກັບເທສນາເຣື່ອງທີ່ເພິ່ນໄດ້ປະສົບມາ. ທ່ານເປໂຕໄດ້ປະກາດວ່າຫຼັງຈາກພຣະເຢຊູຄືນພຣະຊົນ, ພຣະເຈົ້າໄດ້ສົ່ງພຣະວິນຍານລົງມາ.

ທ່ານເປໂຕໄດ້ອ້າງເຖິງເພງສັຣເສີນ 100:1 ຊຶ່ງກະສັດດາວິດໄດ້ທຳນວາຍເຖິງພຣະເມຊີອາ. ເພງສັຣເສີນໄດ້ບົ່ງບອກວ່າພຣະເຢຊູແມ່ນພຣະເມຊີອາ, ອົງພຣະຜູ້ເປັນເຈົ້າແລະພຣະຜູ້ໂຜດໃຫ້ພົ້ນຂອງທຸກຄົນທີ່ວາງໃຈໃນພຣະອົງ. ເປໂຕໄດ້ກ່າວເຖິງຈຸດສູງສຸດຂອງການເທສນາຂອງເພິ່ນໃນ ຂໍ້ 36. ເປໂຕໄດ້ກ່າວຄຳນີ້ດ້ວຍຄວາມແນ່ວແນ່. ເພິ່ນໄດ້ເນັ້ນວ່າແມ່ນເຂົາທີ່ໄດ້ຕຶງພຣະເຢຊູ. ປະຊາຊົນໄດ້ຮ່ວມກັນທຳຜິດຍ້ອນບາບຂອງເຂົາ ແລະການທໍຣະຍົດຕໍ່ພຣະເຈົ້າ ແລະການປະຕິເສດພຣະເມຊີອາຂອງເຂົາ.

ເຄື່ອງໝາຍທີ່ບອກວ່າຄຳເວົ້າມາຈາກພຣະເຈົ້າແມ່ນຈຸດສູນກາງຂອງພຣະເຢຊູ, ໂດຍສະເພາະແມ່ນການສິ້ນພຣະຊົນແລະການເປັນຄືນມາຂອງພຣະອົງ. ເວລາພຣະເຈົ້າກ່າວ, ພຣະອົງຍົກພຣະຄຣິດແລະການງານຂອງພຣະອົງຂຶ້ນ. ພຣະວິນຍານກໍໄດ້ນຳເອົາການພິພາກສາມານຳ. ທ່ານເປໂຕໄດ້ປະກາດວ່າ ແມ່ນຜູ້ຟັງຂອງເພິ່ນທີ່ເປັນສັດຕຣູຂອງພຣະເຈົ້າ. ເວລາພຣະເຈົ້າເວົ້າກັບທ່ານ, ພຣະອົງຈະເອົາໃຈໃສ່ຄວາມບາບໃນຊີວິດຂອງທ່ານ ແລະການບໍ່ເຊື່ອຟັງພຣະທັມຂອງທ່ານ. ພຣະເຈົ້າຈະຊີ້ໃສ່ສິ່ງຕ່າງໆໃນຊີວິດທ່ານທີ່ກີດຂວາງຄວາມສັມພັນຂອງທ່ານກັບພຣະອົງ. ພຣະເຈົ້າຮູ້ຈັກສິ່ງທີ່ສຳຄັນທີ່ສຸດໃນຊີວິດທ່ານ ແລະພຣະອົງຈະເວົ້າເຖິງກໍຣະນີເຫຼົ່ານັ້ນ.

## 2. <u>ກິຈການ 2:37-38</u>

*[37] ເມື່ອຄົນທັງຫຼາຍໄດ້ຍິນດັ່ງນັ້ນແລ້ວກໍຮູ້ສຶກເຈັບຊໍ້າກິນແໜງໃຈ ຈຶ່ງກ່າວແກ່ເປໂຕແລະອັຄສາວົກອື່ນໆວ່າ, "ພີ່ນ້ອງເອີຍ, ພວກເຮົາຈະເຮັດຢ່າງໃດ." [38] ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພຣະນາມຂອງພຣະເຢຊູ ຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ.*

ລັກສນະທີ່ໂດດເດັ່ນຂອງພຣະສຸຣະສຽງຂອງພຣະເຈົ້າແມ່ນ ສຽງຂອງພຣະອົງມັກຈະຄາດຫວັງການຕອບຮັບສເມີ. ທ່ານບໍ່ສາມາດເມີນເສີຍຕໍ່ພຣະສຸຣະສຽງນັ້ນ. ເວລາທ່ານເປໂຕເທສນາໃຫ້ຝູງຊົນຟັງ, ພຣະວິນຍານບໍຣິສຸດຢືນຢັນຄຳເວົ້າຂອງພຣະອົງແກ່ຜູ້ຟັງ. ຜົນຮັບແມ່ນ, "ພວກເຂົາຖືກແທງຫົວໃຈຈົນຊອດ"(ຂໍ້37). ນີ້ຊີ້ໃຫ້ເຫັນເຖິງຄວາມຮູ້ສຶກເຈັບປວດເລິກໆ ເມື່ອຊາວຢິວຮູ້ເມື່ອ, ກັບສິ່ງໜ້າຢ້ານ, ຫຼັງຈາກການລໍຄອຍພຣະເມຊີອາມາເປັນເວລາຫຼາຍສະຕະວັດ, ເຂົາຊໍ້າພັດຕຶງພຣະອົງ. ພຣະເຢຊູສັນຍາວ່າເມື່ອພຣະວິນຍານບໍຣິສຸດ

ສະເດັດມາ, ພຣະອົງຈະຊົງບັນດົນໃຫ້ຮູ້ແຈ້ງໃນເຣື່ອງ "ຄວາມບາບ, ຄວາມຊອບທັມ, ແລະການພິພາກສາ" (ຢຮ 16:8). ພວກເຮົາແຕ່ລະຄົນມີສະພາບບາບແລະມີນິສັຍທໍຣະຍົດຕໍ່ພຣະເຈົ້າ. ພວກເຮົາບໍ່ໄດ້ເຮັດສິ່ງທີ່ຖືກຕ້ອງຫຼືສິ່ງດີໂດຍທັມມະຊາດ. ຈິດສຳນຶກຂອງເຮົາຫ່ຽວແຫ້ງດ້ວຍບາບ, ພວກເຮົາເປັນຄົນສິ້ນຫວັງຖ້າພຣະຄຸນການງານຂອງພຣະເຈົ້າບໍ່ໄດ້ບັນດົນໃຫ້ຮູ້ແຈ້ງເຣື່ອງຄວາມບາບຂອງເຮົາ. ໃນກິຈການບົດ 2 ນີ້, ພຣະວິນຍານບໍຣິສຸດໄດ້ເອົາຄຳເວົ້າຂອງທ່ານເປໂຕຢັດໃສ່ຫົວໃຈໄພ່ພົນຂອງພຣະອົງ. ເວລາພຣະເຈົ້າກ່າວ, ພຣະວິນຍານບໍຣິສຸດຈະຢືນຢັນຕໍ່ວິນຍານຂອງທ່ານ; ທ່ານຈະໄດ້ຮູ້ວ່າຂໍ້ຄວາມມາຈາກພຣະອົງ.

ຄົນທັງຫຼາຍຈະໄດ້ເຂົ້າໃຈວ່າເຂົາຕ້ອງກະທຳທັນທີ ອີງຕາມຖ້ອຍຄຳຂອງພຣະເຈົ້າເວົ້າກັບເຂົາ. ນີ້ມັກຈະມີຄວາມແຕກຕ່າງກັນຢ່າງໃຫຍ່ຫຼວງຣະຫວ່າງຄຳເວົ້າຂອງຊາຕານ ແລະຄຳເວົ້າຂອງພຣະເຈົ້າ. ຊາຕານຈະພະຍາຍາມເຮັດໃຫ້ທ່ານຮູ້ສຶກຜິດ, ແຕ່ບໍ່ໄດ້ໃຫ້ຄຳຕອບແກ່ທ່ານເພື່ອຈະພົບອິສຣະພາບ. ພຣະເຈົ້າ, ໃນດ້ານນຶ່ງ, ຈະຕັດສິນລົງໂທດບາບ, ແລ້ວຈະຫາທາງແກ້ໄຂໃຫ້. ຄຳເວົ້າຂອງຊາຕານພາໃຫ້ຮູ້ສຶກຜິດແລະອາຍ; ຄຳເວົ້າຂອງພຣະເຈົ້ານຳສູ່ການກັບໃຈແລະສູ່ຊີວິດ.

ທ່ານເປໂຕໄດ້ບອກຝູງຊົນໃຫ້ເຮັດສອງຢ່າງ. ນຶ່ງ, ເພິ່ນແນະນຳເຂົາໃຫ້ກັບໃຈ. ສອງ, ທ່ານເປໂຕບອກເຂົາໃຫ້ຮັບບັບຕິສະມາ. ບັບຕິສະມາແມ່ນເຄື່ອງໝາຍພາຍນອກຂອງການປ່ຽນແປງພາຍໃນ. ພຣະຄັມພີໃໝ່ຣະບຸວ່າທຸກຄົນທີ່ບັງເກີດໃໝ່ຕ້ອງຮັບບັບຕິສະມາ. ບັບຕິສະມາເປັນສັນຍາລັກບົ່ງບອກວ່າບຸກຄົນນັ້ນໄດ້ຮ່ວມ ການຕາຍ, ການຝັງ, ແລະ ການເປັນຄືນມາຂອງພຣະເຢຊູ. ເປັນສັນຍາລັກການຕາຍຕໍ່ຄວາມບາບ ແລະເປັນຄືນຂຶ້ນມາສູ່ຊີວິດໃໝ່ໃນພຣະຄຣິດ.

ຜູ້ທີ່ກັບໃຈໄດ້ຮັບສອງສິ່ງ. ນຶ່ງ, ພວກເຂົາໄດ້ຮັບການອະພັຍບາບຂອງເຂົາ. ສິ່ງເຫຼົ່ານີ້ເປັນຂ່າວມະຫັສຈັນສຳລັບຜູ້ທີ່ຟັງທ່ານເປໂຕ. ເພື່ອຄວາມສະບາຍໃຈ, ທ່ານເປໂຕໄດ້ຮັບປະກັນວ່າການອະພັຍເປັນໄປໄດ້ໂດຍທາງພຣະຄຣິດ. ສອງ, ຜູ້ທີ່ກັບໃຈຈາກຄວາມບາບຂອງເຂົາໄດ້ຮັບຂອງພຣະຣາຊທານຈາກພຣະວິນຍານບໍຣິສຸດ. ຄຣິສຕຽນມັກເວົ້າກ່ຽວກັບຂອງປະທານຝ່າຍວິນຍານແຕ່ບໍ່ໃສ່ໃຈຄວາມຈິງວ່າພຣະວິນຍານບໍຣິສຸດເອງແມ່ນຂອງຂວັນອັນລ້ຳຄ່າ. ເມື່ອພຣະວິນຍານບໍຣິສຸດເຂົ້າໃນຊີວິດທ່ານ, ທ່ານຈະມີແຫຼ່ງທຸກສິ່ງຂອງພຣະເຈົ້າເພື່ອໃຫ້ທ່ານສາມາດເຮັດນ້ຳພຣະທັຍຂອງພຣະອົງ.

*ເວລາໃດການບັນດົນໃຈຂອງພຣະວິນຍານບໍຣິສຸດແທງໃຈທ່ານ?*

## 3. ກິຈການ 2:39-41

*[39]ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ, ກັບລູກຫລານຂອງພວກທ່ານ, ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ." [40]ແລະເປໂຕໄດ້ກ່າວສັ່ງເຂົາຫຼາຍປະການອີກ ແລະເຕືອນສະຕິເຂົາວ່າ, "ຈົ່ງເອົາຕົວລອດພົ້ນຈາກເຊື້ອຊາດອັນຄົດລ້ຽວນີ້ເສັຽ." [41]ຝ່າຍຄົນທັງຫຼາຍທີ່ໄດ້ເຊື່ອຮັບຟັງຖ້ອຍຄຳຂອງເປໂຕກໍໄດ້ຮັບບັບຕິສມາໃນວັນນັ້ນມີຄົນຕື່ມເຂົ້າເປັນລູກສິດປະມານສາມພັນຄົນ.*

ເມື່ອເປໂຕສລຸບບົດເທດຂອງເພິ່ນ, ເພິ່ນໃຫ້ຄວາມຫວັງແລະການໜູນໃຈແກ່ຜູ້ຟັງ. ນີ້ແມ່ນເຄື່ອງໝາຍທີ່ແຕກຕ່າງກັບພຣະທັມພຣະເຈົ້າ. ຊາຕານຊອກຫາທາງເຮັດໃຫ້ທ່ານທໍ້ ແລະພາທ່ານໄປສູ່ບ່ອນສິ້ນຫວັງ. ພຣະທັມພຣະເຈົ້ານຳເອົາຄວາມຫວັງສຳລັບວັນທີ່ດີກວ່າໃນຂ້າງໜ້າ!

ທ່ານເປໂຕອ້າງເຖິງພຣະສັນຍາຂອງພຣະເຈົ້າ. ຕໍ່ມາໃນການຮັບໃຊ້ຂອງເພິ່ນ, ທ່ານເປໂຕກໍໄດ້ໃຫ້ຄຳໜູນໃຈອີກເພິ່ນຮູ້ກ່ຽວກັບຄຳສັນຍາຂອງພຣະເຈົ້າ (2 ປຕ 1:4). ເພິ່ນຮູ້ວ່າບໍ່ວ່າພຣະເຈົ້າສັນຍາສິ່ງໃດ, ພຣະອົງກໍຈະເຮັດໃຫ້ສິ່ງນັ້ນສຳເຣັດແນ່ນອນ. ທ່ານເປໂຕເນັ້ນໜັກຂອບເຂດຂອງຄຳສັນຍາແຫ່ງຄວາມພົ້ນຂອງພຣະເຈົ້າ: ສຳລັບທຸກຄົນທີ່ເຊື່ອແລະວາງໃຈໃນເມື່ອພຣະເຈົ້າເອີ້ນເອົາ. ພຣະເຈົ້າສັນຍາວ່າຄວາມພົ້ນມີໄວ້ສຳລັບທຸກຄົນ, ແມ້ກະທັ້ງຜູ້ຢູ່ໄກຈາກພຣະເຈົ້າ.

ທ່ານເປໂຕໃຫ້ຄວາມຫວັງເພື່ອຄົນທັງຫຼາຍສາມາດສາຣະພາບບາບຂອງເຂົາ; ພວກເຂົາພ້ອມດ້ວຍລູກຫຼານຂອງເຂົາສາມາດໄດ້ຮັບຄວາມພົ້ນ. ນີ້ແມ່ນຂ່າວປະເສີດຫ່ຽງແທ້! ພວກເຮົາຕ້ອງລະວັງຕົວວ່າການຕັດສິນໃຈຂອງເຮົາກັບພຣະເຈົ້າສົ່ງຜົນສະທ້ອນໄປຮອດລູກແລະຫຼານຂອງເຮົາພຸ້ນ.

*ແມ່ນໃຜແດ່ທີ່ພຣະເຈົ້າໃຊ້ມາໃນຊີວິດທ່ານເພື່ອນຳເອົາການຕັດສິນລົງໂທດມາໃຫ້?*

ທ່ານເປໂຕໄດ້ຊຸກຍູ້ໃຫ້ຄົນທັງຫຼາຍໄດ້ "ພົ້ນຈາກຄາວຊົ່ວຮ້າຍນີ້" (ຂໍ້ 40). "ໄດ້ພົ້ນ" ແມ່ນສິ່ງຈຳເປັນເບື້ອງຕົ້ນຂອງທຸກຄົນ. ທ່ານເປໂຕເຂົ້າໃຈເຖິງອັນຕະລາຍຕລອດໄປເປັນນິດທີ່ຜູ້ຟັງແຕ່ລະຄົນປະເຊີນຢູ່, ສະນັ້ນເພິ່ນຈຶ່ງເທສນາດ້ວຍໃຈຮ້ອນຮົນ.

ຜົນການເທສນາຂອງທ່ານເປໂຕຄື ສາມພັນຄົນຕ້ອນຮັບຂ່າວປະເສີດແລະຮັບບັບຕິສະມາ. ພຣະເຢຊູໄດ້ບອກລ່ວງໜ້າແລ້ວວ່າສິດຂອງພຣະອົງຈະທຳການໃຫຍ່ກວ່າສິ່ງທີ່ພຣະອົງໄດ້ກະທຳ. ໃນບົດເທສນາບົດນີ້ງ ເປໂຕໄດ້ເຫັນຄົນໄດ້ຮັບຄວາມພົ້ນເພີ້ມຂຶ້ນແລະເຂົ້າໄປໃນຣາຊອານາຈັກຂອງພຣະເຈົ້າຫຼາຍກວ່າທີ່ເກີດຂຶ້ນໃນສມັຍພຣະເຢຊູຮັບໃຊ້ໃນໂລກນີ້. ນີ້ສະທ້ອນເຖິງຣິດອຳນາດໃນຖ້ອຍຄຳຈາກພຣະເຈົ້າຈັດສົ່ງໃນຣິດອຳນາດຂອງພຣະວິນຍານບໍຣິສຸດ.

ຈຸດສຸມຂອງເຮົາໃນບົດຮຽນນີ້ ແມ່ນເພື່ອຈຳແນກສຽງຂອງພຣະເຈົ້າໄດ້. ເວລາພຣະເຈົ້າກ່າວ, ພຣະອົງມັກຈະກ່າວຄວາມຈິງແລະພຣະຄຸນສເມີ.

*ພວກເຮົາສວມບົດບາດອັນໃດໃນພຣະວິນຍານບໍຣິສຸດເພື່ອນຳເອົາການຕັດສິນລົງໂທດມາສູ່ຄົນທັງຫຼາຍ?*

## ນຳໃຊ້ໃນຊີວິດ

ສຽງຂອງພຣະເຈົ້າສແວງຫາການຕັດສິນລົງໂທດເຮົາຕາມຄວາມຈິງ. ທ່ານຈະດຳເນີນຊີວິດຕາມຄວາມຈິງຢ່າງໃດໃນພາກນີ້. ຈົ່ງເລືອກເອົາການນຳໃຊ້ໃນຊີວິດອັນນຶ່ງຕໍ່ລົງໄປນີ້:

- **ຈົ່ງຮັບເອົາພຣະຄຣິດ.** ຖ້າທ່ານບໍ່ເຄີຍໄດ້ສາຣະພາບຄວາມບາບຂອງທ່ານແລະວາງໃຈເຊື່ອພຣະຄຣິດ, ຈົ່ງຮັບດຽວນີ້. ນັດພົບສິດຍາພິບານຫຼືເພື່ອນຄຣິສຕຽນ, ແລະຕົກລົງຮັບສິ່ງສຳຄັນນີ້ສາ.
- **ສາຣະພາບບາບ.** ງານການຕັດສິນລົງໂທດຂອງພຣະວິນຍານບໍຣິສຸດແມ່ນບໍ່ມີຂອບເຂດຈຳກັດຄວາມຕ້ອງການສຳລັບຄວາມລອດພົ້ນ. ຫຼັງຈາກໄດ້ຮັບຄວາມພົ້ນແລ້ວ, ພວກເຮົາຍັງບາບຢູ່. ພຣະວິນຍານບໍຣິສຸດໄດ້ຕັດສິນລົງໂທດທ່ານເຣື່ອງຫຍັງ? ຈົ່ງພິຈາຣະນາວ່າຄວາມບາບອັນໃດທີ່ພຣະວິນຍານບໍຣິສຸດໄດ້ຊີ້ໃນຊີວິດທ່ານວ່າ ພຣະອົງຢາກຊຳລະລ້າງແລະໃຫ້ອະພັຍ. ຈົ່ງຍອມຮັບທຸກສິ່ງທີ່ພຣະອົງຊີ້ໃຫ້ທ່ານໄດ້ເຫັນ.
- **ຈົ່ງແບ່ງປັນພຣະຄຣິດ.** ເຖິງແມ່ນວ່າພຣະວິນຍານບໍຣິສຸດໄດ້ທຳງານຜ່ານເປໂຕກໍຕາມ, ພຣະອົງຕ້ອງການທຳງານຜ່ານທ່ານດ້ວຍ. ຈົ່ງອະທິຖານເພື່ອໂອກາດໃຫ້ພຣະອົງໃຊ້ທ່ານເວົ້າຄວາມຈິງສູ່ຊີວິດຄົນອື່ນ. ເມື່ອໂອກາດນັ້ນມາເຖິງ, ຈົ່ງວາງໃຈໃຫ້ພຣະເຈົ້າທຳງານຜ່ານທ່ານເພື່ອເປີດເຜີຍຄວາມພົ້ນຂອງພຣະອົງໃຫ້ຄົນອື່ນໆ.

ຄົນສ່ວນໃຫຍ່ສາມາດກາຍເປັນຄວາມໝັ້ນໃຈໄດ້ໃນຂນະສິ່ງທີ່ເຂົາກຳລັງເຮັດນັ້ນຖືກຕ້ອງ. ແຕ່ພຣະວິນຍານບໍຣິສຸດຕັດສິນລົງໂທດເຮົາແລະຈະບໍ່ນຳເຮົາໄປເຮັດຜິດຈັກເທື່ອ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**